ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງອັດຕະປື

ພະແນກອຸດສາຫະກຳ ແລະ ການຄ້າ

(ຄະນະກຳມະການປະມູນຂາຍໄມ້ຍຶດຂັ້ນແຂວງ)

ເລກທີ 306 /ອຄ.ອປ

ອັດຕະປື, ວັນທີ 29.04.2019.

## ແຈ້ງການປະມູນ

ເຖິງ : ຜູ້ອຳນວຍການໂຮງງານປຸງແຕ່ງໄມ້ ແລະໂຮງງານເຟີນີເຈີໄມ້ສຳເລັດຮູບ ທົ່ວປະເທດ.

ເລື່ອງ : ເຊີນເຂົ້າຮ່ວມປະມູນຊື້ໄມ້ປ້ອງໄມ້ຍຶດຂອງແຂວງ ຈຳນວນ 05 ບັນຊີ ເທົ່າກັບ 4.733 ທ່ອນ/ຕັບ/ເສັ້ນ/ແຜ່ນ, ບໍລິມາດ : 88,639 ມ3 ( ແປດສິບແປດຈຸດຫົກສາມເກົ້າແມັດກ້ອນ ).

- ອີງຕາມ ຄຳສັ່ງ ເລກທີ 15/ນຍ, ລົງວັນທີ 13/05/2016 ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.
- ອີງຕາມ ຂໍ້ຕົກລົງ ເລກທີ 0918/ອຄ.ຈພງ, ວັນທີ 10 ກໍລະກົດ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.
- ອີງຕາມ ຄຳສັ່ງແນະນຳເລກທີ 0336/ອຄ.ກຂອ, ວັນທີ 13 ມີນາ 2017 ວ່າດ້ວຍການແນະນຳການຈັດຕັ້ງປະຕິບັດປະມູນຂາຍໄມ້ຍຶດເປັນຂອງລັດ.
- ອີງຕາມ ສະໂນດນຳສົ່ງບັນຊີໄມ້ສະໜາມ II ຂອງພະແນກການເງິນແຂວງ ສະບັບເລກທີ 837 ແລະ 932/ກງຂ, ລົງວັນທີ 9 ພະຈິກ 2018 ແລະ 18 ທັນວາ 2018.

ຄະນະກຳມະການປະມູນຂາຍໄມ້ຍຶດຂັ້ນແຂວງ ( ພະແນກອຸດສາຫະກຳ ແລະ ການຄ້າ ແຂວງອັດຕະປື ) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຜູ້ອຳນວຍການໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີ ໄມ້ສຳເລັດຮູບ ພາຍໃນແຂວງ ແລະ ຕ່າງແຂວງທົ່ວປະເທດ ເພື່ອເຂົ້າປະມູນຊື້ໄມ້ຍຶດຂອງແຂວງອັດຕະປື ເຊິ່ງມີລາຍລະອຽດດັ່ງນີ້ :

I. ໄມ້ຍຶດຂອງແຂວງ ທີ່ຈະປະມູນຂາຍ ມີຈຳນວນທັງໝົດ 05 ບັນຊີ ເທົ່າກັບ 4.733 ທ່ອນ/ຕັບ/ເສັ້ນ/ແຜ່ນ, ບໍລິມາດ : 88,639 ມ3 ( ແປດສິບແປດຈຸດຫົກສາມເກົ້າແມັດກ້ອນ ).ໃນນັ້ນມີ :

- ໄມ້ດູ່ ມີບໍລິມາດທັງໝົດ : 68,083 ມ3 ( ຫົກສິບແປດຈຸດສູນແປດສາມແມັດກ້ອນ ) ໃນນັ້ນ :
  - + ໄມ້ດູ່ທ່ອນ ບໍລິມາດ : 2,445 ມ3 ( ສອງຈຸດສີ່ສີ່ຫ້າແມັດກ້ອນ ).
  - + ໄມ້ດູ່ຕັບ ບໍລິມາດ : 10,823 ( ສິບຈຸດແປດສອງສາມແມັດກ້ອນ ).
  - + ໄມ້ດູ່ເຄິ່ງສຳເລັດຮູບ+ຊິ້ນສ່ວນ ບໍລິມາດ : 54,815 ( ຫ້າສິບສີ່ຈຸດແປດໜຶ່ງຫ້າແມັດກ້ອນ ).
- ໄມ້ປະດົ່ງທ່ອນ ບໍລິມາດ : 0,145 ມ3 ( ສູນຈຸດໜຶ່ງສີ່ຫ້າແມັດກ້ອນ ).
- ໄມ້ມັນປາເຄິ່ງສຳເລັດຮູບ ບໍລິມາດ : 1,188 ມ3 ( ໜຶ່ງຈຸດໜຶ່ງແປດແປດແມັດກ້ອນ ).
- ໄມ້ບາກ ມີບໍລິມາດທັງໝົດ : 19,223 ມ3 ( ສິບເກົ້າຈຸດສອງສອງສາມແມັດກ້ອນ ) ໃນນັ້ນ :
  - + ໄມ້ບາກຕັບ ບໍລິມາດ : 14,317 ມ3 ( ສິບສີ່ຈຸດສາມໜຶ່ງເຈັດແມັດກ້ອນ ).
  - + ໄມ້ບາກຊິ້ນສ່ວນ ບໍລິມາດ : 4,906 ມ3 ( ສີ່ຈຸດເກົ້າສູນຫົກແມັດກ້ອນ ).

ລາຍລະອຽດແຕ່ລະບັນຊີດັ່ງນີ້ :

1. ບັນຊີເລກທີ 320/ກກປຂ, ລົງວັນທີ 29/10/2018 ຈຳນວນ 4.059 ເສັ້ນ/ແຜ່ນ, ບໍລິມາດ 50,076 ມ3 ( ໄມ້ດູ່ຊິ້ນສ່ວນ, ເຄິ່ງສຳເລັດຮູບ ແລະ ໄມ້ມັນປາ ) ຢູ່ສາງການຄ້າ ທີ່ບ້ານຫຼັກ 3.

2. ບັນຊີເລກທີ 321/ກກປຂ, ລົງວັນທີ 29/10/2018 ຈຳນວນ 107 ຕົບ, ບໍລິມາດ 18,099 ມ3 ( ໄມ້ບາກຕົບ ແລະ ໄມ້ບາກ ຊີ້ນສ່ວນ ) ຢູ່ສາງການຄ້າ ທີ່ບ້ານຫຼັກ 3.

3. ບັນຊີເລກທີ 322/ກກປຂ, ລົງວັນທີ 29/10/2018 ຈຳນວນ 336 ທ່ອນ/ຕົບ/ເສັ້ນ/ແຜ່ນ, ບໍລິມາດ 12,842 ມ3 ( ໄມ້ດູ່ ) ຢູ່ສາງການຄ້າ ທີ່ບ້ານຫຼັກ 3.

4. ບັນຊີເລກທີ 323/ກກປຂ, ລົງວັນທີ 29/10/2018 ຈຳນວນ 190 ທ່ອນ/ຕົບ, ບໍລິມາດ 5,752 ມ3 (ໄມ້ດູ່, ປະດົງ ແລະ ບາກ ) ຢູ່ສາງການຄ້າ ທີ່ບ້ານຫຼັກ 3.

5. ບັນຊີເລກທີ 324/ກກປຂ, ລົງວັນທີ 29/10/2018 ຈຳນວນ 41 ຕົບ, ບໍລິມາດ 1,870 ມ3 ( ໄມ້ດູ່ ) ຢູ່ສາງການຄ້າ ທີ່ບ້ານ ຫຼັກ 3.

II. ເງື່ອນໄຂເພື່ອເຂົ້າຮ່ວມການປະມູນຊື້ໄມ້ຍຶດຂອງແຂວງ.

1. ຜູ້ທີ່ມີໂຮງງານປຸງແຕ່ງໄມ້, ເຟີນີເຈີປຸງແຕ່ງໄມ້ທີ່ມີທະບຽນຖືກຕ້ອງຕາມກົດໝາຍ ຂອງ ສປປລາວ ຢູ່ພາຍໃນແຂວງ ແລະ ຕ່າງແຂວງ ( ໃຫ້ສຳເນົາຄັດຕິດ ), ຕ້ອງເປັນໂຮງງານທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ, ເປັນໂຮງງານທີ່ສາມາດປຸງແຕ່ງສຳເລັດຮູບໄດ້ ແລະ ບໍ່ຕັ້ງໃນ 03 ປະເພດປ່າ.

2. ຕ້ອງສາມາດຜະລິດເປັນຜະລິດຕະພັນສຳເລັດຮູບ ຕາມຂໍ້ຕົກລົງ ສະບັບເລກທີ 1833/ອຄ, ລົງວັນທີ 03 ຕຸລາ 2016 ແລະ ( ສະບັບປັບປຸງ ) ສະບັບເລກທີ 0002/ອຄ.ກຂອ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍການຮັບຮອງເອົາລາຍການຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ.

3. ເງື່ອນໄຂຜູ້ທີ່ມີສິດເຂົ້າຮ່ວມການປະມູນ ຕ້ອງແມ່ນຜູ້ອຳນວຍການ ຫຼື ຕົວແທນ ຂອງໂຮງງານປຸງແຕ່ງໄມ້ ທີ່ໄດ້ຮັບການແຕ່ງຕັ້ງມອບສິດ, ສາມາດຕັດສິນບັນຫາໃນການປະມູນໄດ້.

4. ຕ້ອງເປັນໂຮງງານປຸງແຕ່ງໄມ້ທີ່ມີຄວາມພ້ອມທາງດ້ານຖານະການເງິນ, ມີໃບຢັ້ງຢືນຖານະການເງິນຈາກທະນາຄານຕິດຄັດມາພ້ອມ.

5. ຕ້ອງແມ່ນໂຮງງານປຸງແຕ່ງໄມ້ ທີ່ບໍ່ມີໜີ້ສິນ ຄ່າພັນທະອາກອນ ຕ່າງໆກັບລັດ. ກໍລະນີຜູ້ຊະນະການປະມູນ ຫາກມີໜີ້ສິນນຳລັດ ຄະນະກຳມະການປະມູນຊື້ - ຂາຍໄມ້ຂັ້ນແຂວງ ແມ່ນຈະໄດ້ມີການຄົ້ນຄ້ວາພິຈາລະນາ.

6. ຜູ້ຊະນະການປະມູນ ຕ້ອງຖອກເງິນມັດຈຳ 10 % ກ່ອນຂໍຂໍ້ຕົກລົງອະນຸມັດຂາຍຂອງທ່ານເຈົ້າແຂວງ.

III. ວັນເວລາເປີດເປີດຂາຍຊອງປະມູນ.

ຜູ້ທີ່ສົນໃຈໃຫ້ເຂົ້າມາພົວພັນຊື້ຊອງປະມູນ ທີ່ ພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື ( ຂະແໜງການນຳເຂົ້າ ແລະ ສົ່ງອອກ ) ໃນໂມງລັດຖະການ.

- ກຳນົດວັນເວລາຂາຍຊອງປະມູນ ແມ່ນ 15 ວັນລັດຖະການ ( ນັບແຕ່ວັນທີ 29/4/2019 ຫາວັນທີ 15/05/2019 ).
- ກຳນົດວັນເວລາມື້ເປີດຊອງປະມູນແມ່ນເວລາ 9 : 00 ໂມງເຊົ້າ ຂອງວັນທີ 16/05/2019.
- ສະຖານທີ່ : ຫ້ອງປະຊຸມພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື.
- ລາຄາຊອງປະມູນ : 1.000.000 ກີບ/ຊອງ ( ສຳລັບຄ່າຊອງປະມູນນັ້ນ ແມ່ນບໍ່ໄດ້ສົ່ງຄືນ ).
- ກະລຸນາຖືຊອງປະມູນໄວ້ກັບຕົນເອງ ຈົນຮອດເວລາ 9 : 00 ໂມງເຊົ້າຂອງວັນທີ 16/05/2019, ຈຶ່ງໃຫ້ມາມອບສົ່ງນຳຄະນະກຳມະການປະມູນຂາຍໄມ້ ທີ່ຫ້ອງປະຊຸມ : ພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື, ຖ້າກາຍຖືວ່າລະຫຼະສິດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອເຂົ້າຮ່ວມການປະມູນ ຕາມກຳນົດເວລາຂ້າງເທິງດ້ວຍ.

ຫົວໜ້າພະແນກອຸດສາຫະກຳ ແລະການຄ້າແຂວງ.
( ຄະນະກຳມະການປະມູນຂາຍໄມ້ຂັ້ນແຂວງ )

ຄຳວັນ ຈັນທະໂຄດ
Khamvan CHANTHAKHOT

ຕິດຕໍ່ພົວພັນ:

- ທ່ານ ພະຫັດໄຊ 020 2229 2298
- ທ່ານ ນາງຄານດາວອນ 020 2242 3777
- ທ່ານ ທິດປະກາຍສີ 020 5553 4456